ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** *ເລກທີ 213/ນຍ*

*ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2009*

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ ປ ປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໃບສະເໜີ ຂອງທ່ານປະທານຄະນະປັບປຸງທຸລະກິດແຫ່ງຊາດ ສະບັບເລກທີ 160 / ສນຍ ລົງວັນທີ 04 ສິງຫາ 2009;
- ອີງຕາມໃບສະເໜີ ຂອງທ່ານຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 82 / ທປຄ, ລົງວັນທີ 03 ສິງຫາ 2009.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. **ຈຸດປະສົງ**

ດຳລັດສະບັບນີ້ ກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກຂອງຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ແຕ່ຂັ້ນສູນກາງ ລົງຮອດທ້ອງຖິ່ນ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການດັ່ງກ່າວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການປັບປຸງທຸລະກິດແຫ່ງຊາດຊຶ່ງເປັນຕົວອັກສອນຫຍໍ້ວ່າ "ຄປທຊ" ແມ່ນການຈັດຕັ້ງໜຶ່ງສັງກັດຢູ່ສຳນັກງານນາຍົກລັດຖະມົນຕີ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ນາຍົກລັດຖະມົນຕີໃນການປະສານງານ ແລະ ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນ ຄົ້ນຄວ້າປັບປຸງຮູບແບບ, ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງບັນດາລັດວິສາຫະກິດ, ທຸລະກິດປະສົມລັດ-ເອກະຊົນ, ທຸລະກິດຮ່ວມມືລັດ ແລະ ປະຊາຊົນ. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາບັນດາວິສາຫະກິດ ຂອງພາກສ່ວນ ເສດຖະກິດຕ່າງໆ ໃນຂອບເຂດທົ່ວປະເທດໃຫ້ເຕີບໃຫຍ່ຂະຫຍາຍຕົວຕາມແນວທາງ ແລະ ນະໂຍບາຍ ຂອງພັກ - ລັດໃນແຕ່ລະໄລຍະ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ຄະນະປັບປຸງທຸລະກິດແຫ່ງຊາດມີໜ້າທີ່ຕົ້ນຕໍດັ່ງນີ້:

1. ປະສານງານກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງຕັ້ງບໍລິສັດຂອງລັດ, ສ້າງແຜນຍຸດທະສາດໄລຍະຍາວ, ໄລຍະກາງ ແລະ ແຜນການປະຈຳປີໃນການປັບປຸງທຸລະກິດເພື່ອນຳສະເໜີລັດຖະບານ, ນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;
2. ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນ ຫັນເອົາແຜນຍຸດທະສາດ ການປັບປຸງທຸລະກິດ ທີ່ລັດຖະບານຮັບຮອງເປັນທາງການ ໃຫ້ເປັນແຜນການ, ແຜນງານ, ເປັນໂຄງ ການ ແລະ ຈັດຕັ້ງປະຕິບັດຕົວຈິງ ຕາມແນວທາງຂອງພັກ ແລະ ນະໂຍບາຍຂອງລັດ. ຊີ້ນຳການສ້າງກົນໄກ, ນະໂຍບາຍ ແລະ ລະບຽບກົດໝາຍ ເພື່ອຄຸ້ມຄອງ, ພັດທະນາວິສາຫະກິດພາກສ່ວນເສດຖະກິດຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນ ສປປ ລາວ;
3. ເປັນໃຈກາງໃນການສົມທົບກັບກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນ ຄົ້ນຄວ້າ, ປັບປຸງກ່ຽວກັບຮູບແບບ, ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງລັດວິສາຫະກິດ, ວິສາຫະກິດປະສົມລັດ-ເອກະຊົນ ແລະ ວິສາຫະກິດຮ່ວມມືລັດ ແລະ ປະຊາຊົນ ເພື່ອໃຫ້ມີຄວາມເຂັ້ມແຂງທັງດ້ານການຈັດຕັ້ງ ແລະ ທຶນຮອນ, ຄວາມສາມາດແກ່ງແຍ້ງແຂ່ງຂັນ ແລະ ເປັນຕົວແບບນຳໜ້າພາທາງໃຫ້ແກ່ວິສາຫະກິດພາກສ່ວນອື່ນ;
4. ຊີ້ນຳ, ແລະ ແນະນຳບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃຫ້ເອົາໃຈໃສ່ຄຸ້ມຄອງ ແລະ ປັບປຸງທຸລະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ດຳເນີນທຸລະກິດ ມີປະສິດທິຜົນສູງ;
5. ຕິດຕາມ, ກວດກາ, ເກັບກຳສະພາບການເຄື່ອນໄຫວທຸລະກິດ, ຕີລາຄາປະເມີນຜົນ ແລະ ຖອດຖອນບົດຮຽນກ່ຽວກັບການດຳເນີນທຸລະກິດ ເພື່ອລາຍງານໃຫ້ແກ່ລັດຖະບານ, ນາຍົກລັດຖະມົນຕີຢ່າງເປັນປົກກະຕິ;

6. ຈັດຕັ້ງບຳລຸງ, ຝຶກອົບຮົມ ແລະ ຍົກລະດັບໃຫ້ແກ່ພະນັກງານ-ລັດຖະກອນ ຜູ້ທີ່ເຮັດວຽກງານຄຸ້ມຄອງ ແລະ ພັດທະນາວິສາຫະກິດຂອງບັນດາກະຊວງ, ຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ວິສາຫະກິດຕ່າງໆ;
7. ສຶກສາອົບຮົມການເມືອງແນວຄິດ ແລະ ກໍ່ສ້າງບຳລຸງຍົກລະດັບດ້ານວິຊາສະເພາະໃຫ້ແກ່ພະນັກງານ-ລັດຖະກອນ ພ້ອມທັງເອົາໃຈໃສ່ປັບປຸງບູລະນະກົງຈັກການຈັດຕັ້ງທີ່ຂຶ້ນກັບຄວາມຮັບຜິດຊອບ ຄຸ້ມຄອງຂອງຕົນຢ່າງເປັນປົກກະຕິ;
8. ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ຊັບສົມບັດຂອງລັດທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຕາມລະບຽບການທີ່ໄດ້ກຳນົດໄວ້;
9. ພົວພັນ, ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆ ຕາມການຕົກລົງອະນຸມັດຂອງລັດຖະບານ ແລະ ນາຍົກລັດຖະມົນຕີ;
10. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງລັດຖະບານ ແລະ ນາຍົກລັດຖະມົນຕີ.

**ມາດຕາ 4. ຂອບເຂດສິດ**

ຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ມີສິດຕົ້ນຕໍດັ່ງນີ້ :

1. ປະຕິບັດຕາມການມອບໝາຍຂອງ ລັດຖະບານ, ນາຍົກລັດຖະມົນຕີ ໃນຊຸກຍູ້, ຕິດຕາມ, ກວດກາບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງ, ພັດທະນາວິສາຫະກິດ-ທຸລະກິດ;
2. ສະຫຼຸບ, ສັງລວມບັນຫາຕ່າງໆທີ່ເກີດຂຶ້ນແລ້ວ ລາຍງານລັດຖະບານ, ນາຍົກລັດຖະມົນຕີພິຈາລະນາກໍລະນີເກີນຂອບເຂດສິດແກ້ໄຂຂອງຕົນ ຫລື ມີຄວາມເຫັນແຕກຕ່າງກັນກ່ຽວກັບບັນຫາໃດໜຶ່ງ ໃນການປັບປຸງທຸລະກິດເພື່ອໃຫ້ລັດຖະບານ, ນາຍົກລັດຖະມົນຕີແກ້ໄຂ, ຊີ້ນຳ, ແນະນຳບັນດາກະຊວງ, ອົງການທຽບເທົ່າ, ຂະແໜງການ , ອຳນາດການປົກຄອງທ້ອງຖິ່ນປະຕິບັດ;
3. ຮ່ວມກັບບັນດາກະຊວງ, ຂະແໜງການ, ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາ, ຄົ້ນຄວ້າກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກ ບໍລິສັດຂອງລັດ, ບໍລິສັດປະສົມລັດ-ເອກະຊົນ , ທຸລະກິດຮ່ວມມືລັດ ແລະ ປະຊາຊົນ ຕາມນະໂຍບາຍຂອງພັກ-ລັດໃນແຕ່ລະໄລຍະ;
4. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ມາດຕະການຕ່າງໆ ທີ່ນອນຢູ່ໃນພາລະບົດບາດ ແລະ ໜ້າທີ່ຂອງຕົນ;
5. ເລືອກເຟັ້ນ, ຈັດຮຽງບຸລິມະສິດ ເພື່ອສະເໜີລັດຖະບານ, ນາຍົກລັດຖະມົນຕີອະນຸມັດການລົງທຶນ, ການປັບປຸງລັດວິສາຫະກິດຂະໜາດໃຫຍ່ ແລະ ຂະໜາດກາງໃນແຕ່ລະໄລຍະ;
6. ພົບປະເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕ່າງໆ ກັບບັນດາອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ. ຮັບເອົາການຊ່ວຍເຫຼືອຕ່າງໆ ເຂົ້າໃນວຽກງານປັບປຸງທຸລະກິດ ຕາມການຕົກລົງຂອງລັດຖະບານ, ນາຍົກລັດຖະມົນຕີ ແລະ ຕາມລະບຽບກົດໝາຍຂອງລັດກຳນົດ;
7. ເຊື້ອເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງຈາກກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນມາລາຍງານ ຫລື ເຂົ້າຮ່ວມປະຊຸມເພື່ອປຶກສາຫາລື ກ່ຽວກັບບັນດາບັນຫາທີ່ພົວພັນກັບພາລະບົດບາດ ແລະ ໜ້າທີ່ຂອງຕົນ. ທວງເອົາ, ຮັບເອົາບົດສະຫຼຸບ, ຂໍ້ມູນຂ່າວສານ, ສະຖິຕິ ແລະ ເອກະສານທາງການທີ່ກ່ຽວຂ້ອງກັບບັນຫາທຸລະກິດ-ວິສາຫະກິດຕ່າງໆນຳບັນດາກະຊວງ, ອົງການ

ທຽບເທົ່າ, ຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ຫົວໜ່ວຍວິສາຫະກິດຕ່າງໆ ເພື່ອຮັບໃຊ້ໃຫ້ການຄົ້ນຄວ້າ ແລະ ພັດທະນາທຸລະກິດ ໃນຂອບເຂດທົ່ວປະເທດ;

8. ເຂົ້າຮ່ວມປະຊຸມຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ພົວພັນກັບພາລະບົດບາດ ແລະ ໜ້າທີ່ຂອງຕົນຕາມການເຊື້ອເຊີນ;
9. ແຕ່ງຕັ້ງ, ເລື່ອນຊັ້ນ, ປົດຕຳແໜ່ງ, ຍົກຍ້າຍ, ຊັບຊ້ອນໜ້າທີ່, ຄຸ້ມຄອງ, ກໍ່ສ້າງ, ນຳໃຊ້, ຍ້ອງຍໍ, ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຂື້ນກັບສິດການຄຸ້ມຄອງຂອງຕົນ;
10. ສະເໜີສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ບັນດາພະແນກ ແລະ ໜ່ວຍງານສະເພາະກິດ ຂອງຫ້ອງການ ຄປທຊ. ປະກອບຄວາມເຫັນໃສ່ການຕົກລົງສ້າງຕັ້ງ, ປັບປຸງ ແລະ ຍົກເລີກໜ່ວຍງານສະເພາະກິດການປັບປຸງທຸລະກິດ, ການພັດທະນາວິສາຫະກິດຢູ່ຂະແໜງການ ແລະ ທ້ອງຖິ່ນຕ່າງໆ;
11. ຄົ້ນຄ້ວາແກ້ໄຂ ຫລື ສະເໜີອົງການທີ່ກ່ຽວຂ້ອງແກ້ໄຂກ່ຽວກັບຂໍ້ສະເໜີ , ຄຳຮ້ອງຟ້ອງ, ຄຳຮ້ອງທຸກຂອງພະນັກງານຢູ່ໃນບັນດາລັດວິສາຫະກິດ, ທຸລະກິດປະສົມລັດ-ເອກະຊົນພາຍໃນ ແລະ ຕ່າງປະເທດ, ທຸລະກິດຮ່ວມມືລັດ ແລະ ປະຊາຊົນ ທີ່ພົວພັນເຖິງວຽກງານທຸລະກິດຂອງວິສາຫະກິດ;
12. ຄຸ້ມຄອງ, ນຳໃຊ້ພາຫະນະ, ອຸປະກອນ, ຊັບສິນບັດ ແລະ ງົບປະມານທີ່ລັດເບີກຈ່າຍໃຫ້ຕາມລະບຽບການກຳນົດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບບຸກຄະລາກອນ**

1. ຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ມີລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ໜຶ່ງທ່ານເປັນປະທານ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ. ປະທານມີຄວາມຮັບຜິດຊອບຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ຫຼື ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ແລະ ພາລະບົດບາດ, ໜ້າທີ່ ຂອງ ຄປທຊ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 2,3 ແລະ 4 ຂອງດຳລັດສະບັບນີ້;
2. ຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ປະກອບມີຮອງປະທານ ສອງທ່ານ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ. ຮອງປະທານເປັນຜູ້ຊ່ວຍວຽກປະທານ ໃນການນຳພາ ແລະ ອຳນວຍຄວບຄຸມວຽກງານລວມຂອງ ຄປທຊ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງປະທານ, ເມື່ອປະທານຫາກມີວຽກຕິດຂັດອັນຈຳເປັນຮອງປະທານ ຜູ້ທີ່ໄດ້ຮັບມອບໝາຍສິດເປັນຜູ້ຮັກສາການແທນ. ຖານະຕຳແໜ່ງຂອງຮອງປະທານກຳນົດແຈ້ງຢູ່ໃນດຳລັດແຕ່ງຕັ້ງ;
3. ຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ປະກອບມີ : ຫົວໜ້າຫ້ອງການ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີ, ປະທານ ຄປທຊ;
4. ຫ້ອງການຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ປະກອບມີ ຮອງຫົວໜ້າຫ້ອງການ, ມີຫົວໜ້າ ແລະ ຮອງຫົວໜ້າພະແນກຈຳນວນໜຶ່ງ ເຊິ່ງໄດ້ຮັບແຕ່ງຕັ້ງໂດຍ ລັດຖະມົນຕີ, ປະທານ ຄປທຊ;
5. ພະນັກງານຊ່ວຍວຽກປະກອບດ້ວຍ ພະນັກງານວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງທີ່ໄດ້ຖືກບັນຈຸເຂົ້າໃນພະແນກຕ່າງໆຕາມຄວາມເໝາະສົມ.

**ມາດຕາ 6. ໂຄງປະກອບກົງຈັກ**

1. ໂຄງປະກອບກົງຈັກຂອງ ຄປທຊ ປະກອບມີ ຫ້ອງການເປັນກົງຈັກຊ່ວຍວຽກ, ມີຖານະເທົ່າກັບກົມ.
2. ໃນຫ້ອງການ ຄປທຊ ປະກອບມີ 4 ພະແນກຄື :
   - ພະແນກຈັດຕັ້ງ, ບໍລິຫານ-ການເງິນ
   - ພະແນກຄົ້ນຄ້ວາສັງລວມ
   - ພະແນກສົ່ງເສີມ ວິສາຫະກິດ ທຸລະກິດເອກະເທດ-ເອກະຊົນຂອງພາກສ່ວນເສດຖະກິດອື່ນໆ
   - ພະແນກປັບປຸງ ວິສາຫະກິດຂອງລັດ, ວິສາຫະກິດປະສົມລັດ-ເອກະຊົນ ແລະ ວິສາຫະກິດ ຮ່ວມມືລັດ ແລະ ປະຊາຊົນ
3. ການຈັດຕັ້ງຢູ່ໃນກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ ທີ່ມີຫົວໜ່ວຍທຸລະກິດຂຶ້ນກັບ ອາດຈະມີພະແນກ ຫຼື ໜ່ວຍງານກໍ່ໄດ້ສັງກັດຢູ່ຫ້ອງການກະຊວງ. ພະແນກ ຫລື ໜ່ວຍງານ ໄດ້ຮັບການແຕ່ງຕັ້ງ ຫລື ຍຸບເລີກ ໂດຍທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ຢູ່ພາຍໃຕ້ການຄຸ້ມຄອງ, ຊີ້ນຳດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ, ອົງການທຽບເທົ່າ ແລະ ຢູ່ພາຍໃຕ້ການຊີ້ນຳ, ແນະນຳດ້ານວິຊາການຂອງ ຄປທຊ.
4. ການຈັດຕັ້ງຢູ່ທ້ອງຖິ່ນ.
   - ນະຄອນຫລວງ ແລະ ທຸກໆແຂວງ ມີຄະນະຊີ້ນຳປັບປຸງທຸລະກິດຂອງຕົນ. ຄະນະຊີ້ນຳໂດຍແມ່ນທ່ານຮອງເຈົ້າຄອງນະຄອນຫລວງ, ຮອງເຈົ້າແຂວງໜຶ່ງທ່ານເປັນຫົວໜ້າ ແລະ ມີຫົວໜ້າ ຫລື ຮອງຫົວໜ້າພະແນກ ຂອງບັນດາຂະແໜງການທີ່ກ່ຽວຂ້ອງເປັນຄະນະ. ເຈົ້າແຂວງ, ເຈົ້າຄອງນະຄອນຫລວງຕົກລົງແຕ່ງຕັ້ງ ຫລື ຍຸບເລີກ ຫົວໜ້າ , ບັນດາສະມາຊິກໃນຄະນະ, ຫ້ອງການ ແລະ ໜ່ວຍງານປັບປຸງທຸລະກິດ ຂອງແຂວງ, ນະຄອນຫລວງ;
   - ຄະນະຊີ້ນຳມີຫ້ອງການ ຫລື ໜ່ວຍງານປັບປຸງທຸລະກິດເປັນກົງຈັກຊ່ວຍວຽກສັງກັດຢູ່ຫ້ອງວ່າການແຂວງ, ນະຄອນຫລວງ. ຫ້ອງການ ຫລື ໜ່ວຍງານປັບປຸງທຸລະກິດຢູ່ພາຍໃຕ້ການຄຸ້ມຄອງ, ຊີ້ນຳດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງແຂວງ, ນະຄອນຫລວງ ແລະ ຢູ່ພາຍໃຕ້ການຊີ້ນຳ, ແນະນຳດ້ານວິຊາການຂອງ ຄປທຊ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ ແລະ ແບບແຜນວິທີເຮັດວຽກ**

ຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ເຮັດວຽກຕາມຫຼັກການ ແລະ ວິທີການດັ່ງນີ້ :

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ;
2. ທຸກໆການເຄື່ອນໄຫວ ຂອງຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ແມ່ນປະຕິບັດຕາມແນວທາງ ນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍ ຂອງລັດວາງອອກ. ມີການປະສານສົມທົບກັບພາກສ່ວນຕ່າງໆ ຢ່າງເປັນປົກກະຕິໃນແຕ່ລະໄລຍະ;

3. ພົວພັນປະສານສົມທົບກັບອົງການບໍລິຫານລັດຂັ້ນສູນກາງ, ທ້ອງຖິ່ນ ແລະ ຫົວໜ່ວຍທຸລະກິດ ກ່ຽວກັບວຽກງານທີ່ຄະນະກຳມະການຮັບຜິດຊອບ ເພື່ອຄົ້ນຄ້ວາສະເໜີທິດປັບປຸງ ແລະ ພັດທະນາທຸລະກິດຢ່າງຮອບດ້ານ ແລະ ແທດເໝາະກັບຕົວຈິງ;
4. ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງປະຈຳເດືອນ, ປີ ສະຫຼຸບກວດກາການເຄື່ອນໄຫວວຽກງານເພື່ອລາຍງານຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ.**
ຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ມີງົບປະມານ ແລະ ມີກາປະທັບຂອງຕົນ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9.** ມອບໃຫ້ປະທານຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ຜັນຂະຫຍາຍດຳລັດສະບັບນີ້ ໂດຍກຳນົດ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຫ້ອງການຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ເປັນອັນລະອຽດ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

**ມາດຕາ10.** ຄະນະເລຂາທິການລັດຖະບານ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11.** ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 11/ນຍ, ລົງວັນທີ 11 ກຸມພາ 2002 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການປັບປຸງທຸລະກິດ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

**ບົວສອນ ບຸບຜາວັນ**